# ເຄື່ອງມືການສະແດງ ຂໍ້ມູນ ໃນຮູບແບບພາບ



ວິທີສ້າງຮູບພາບ ແລະ ວິດີໂອທີ່ໜ້າສົນໃຈ ໃນສື່ສັງຄົມ ອອນລາຍ



# ຮູບພາບສາມາດດຶງຄວາມສົນໃຈໄດ້ໄວ ກວ່າຂໍ້ຄວາມທົ່ວໄປຫຼາຍ




ເຄື່ອງມືການສະແດງຂໍ້ມູນທາງດິຈິຕອນສາມາດເຮັດໃຫ້ຕົວເລກ, ແນວຄິດ ແລະ ເລື່ອງນັ້ນໄດ້ ກາຍເປັນແຜນວາດ, ອິນໂຟກາຟິກ ແລະ ວິດີໂອທີ່ໂດດເດັ່ນໃນສື່ສັງຄົມອອນລາຍໄດ້




ການແບ່ງປັນຂໍ້ມູນກ່ຽວກັບສະພາບອາກາດ, ຜົນສຳຫຼວດ ຫຼື ຂໍ້ຄວາມສຳຄັນ ຜ່ານຮູບພາບທີ່ດີ ຊ່ວຍໃຫ້ເຂົ້າໃຈໄດ້ງ່າຍແລະ ສາມາດແບ່ງປັນໄດ້ຢ່າງມີປະສິດທິພາບ. ນີ້ແມ່ນເຄື່ອງມືທີ່ໃຊ້ງ່າຍ ຊ່ວຍໃຫ້ແນວຄິດຂອງເຈົ້າກາຍເປັນຄວາມຈິງ ແລະ ສົ່ງຂໍ້ຄວາມຂອງເຈົ້າໄປສູ່ຜູ້ຄົນຫຼາຍຂຶ້ນ!

# Canva

Canva.com

**Canva** ແມ່ນເຄື່ອງມືອອກແບບທີ່ໃຊ້ງ່າຍ ເຊິ່ງເຮັດໃຫ້ເຈົ້າສາມາດສ້າງພາບ, ອິນໂຟກາຟິກ ແລະ ໂພສໃສ່ສື່ສັງຄົມອອນລາຍ ດ້ວຍຄຸນລັກສະນະ ທີ່ມີເຄື່ອງມືໃຊ້ຢ່າງຫຼາກຫຼາຍ ແລະ ຈັບວາງໄດ້ງ່າຍດາຍ

ສະບັບໃຫ້ໃຊ້ລ້າມີເຄື່ອງມືພື້ນຖານ ແລະ ແມ່ແບບ;
ສະບັບ Pro ຕ້ອງໄດ້ປົດລັອກຟັງເຊັນເພີ່ມເຕີມ.



# Google Sheets

[docs.google.com/spreadsheets/](docs.google.com/spreadsheets/)

ເຄື່ອງມືທາງເວັບທີ່ໃຊ້ໃນການສ້າງ ແລະ ແກ້ໄຂແບບຄິດໄລ່, ແຜນວາດ ແລະ ພາບກາບຟິກ. ຈັດລຽງຂໍ້ມູນ, ສ້າງກາບ ແລະ ຮ່ວມເຮັດວຽກກັບຜູ້ອື່ນໃນທາງອອນລາຍໄດ້.

**ຟຣີ!**




# Flourish

flourish.studio

**Flourish**
ແມ່ນເຄື່ອງມືອອນລາຍທີ່ຊ່ວຍໃຫ້ເຈົ້າສ້າງແຜນວາດ, ແຜນທີ່ ແລະ ບົດເລື່ອງຂໍ້ມູນ ມັນໃຊ້ງ່າຍ ແລະເຮັດໃຫ້ຮູບພາບຂອງເຈົ້າເດັ່ນຂຶ້ນ

ໃນສື່ສັງຄົມອອນລາຍ ຫຼື ໃນເວັບໄຊໄດ້ຢ່າງສີມືອາຊີບ

**ເຄື່ອງມືໃຊ້ລ້າໆ!**

# ChartBlocks

chartblocks.io

**ChartBlocks** ແມ່ນເຄື່ອງມືສ້າງພາບທີ່ໃຊ້ຜ່ານເວັບ, ເຊິ່ງ ສາມາດສ້າງພາບເສັ້ນ graph ແບບທາງນອນ, ພາບເສັ້ນວົງມົນ ແລະ ການສະແດງຂໍ້ມູນອື່ນໆ ໂດຍບໍ່ຕ້ອງໃຊ້ການໂປຣແກຣມມິງ.

ໃຊ້ງ່າຍສຳລັບຜູ້ເລີ່ມຕົ້ນ ແລະ ເໝາະສົມສຳລັບການສະແດງຂໍ້ມູນທີ່ງ່າຍ.

ສະບັບຟຣີສາມາດສ້າງກາຟພື້ນຖານໄດ້, ແຕ່ຮູບພາບທີ່ມີຄວາມລະອຽດສູງ ແລະ ຂໍ້ມູນຈຳນວນຫລາຍຈະຕ້ອງໃຊ້ໃນຮູບແບບການຈ່າຍເງິນ.

# CapCut

**CapCut** ແມ່ນເຄື່ອງມືຕັດຕໍ່ວິດີໂອ, ແຕ່ເຈົ້າສາມາດໃຊ້ມັນເພື່ອເຮັດໃຫ້ຂໍ້ມູນເບິ່ງໜ້າສົນໃຈຂຶ້ນ.

**ເຈົ້າສາມາດ:**

- ເພີ່ມພາບວາດ ແລະ ຕາຕະລາງໃສ່ໃນວິດີໂອເພື່ອອະທິບາຍທ່າອ່ຽງ.
- ເພີ່ມຂໍ້ຄວາມ ແລະ ການເຄື່ອນໄຫວເພື່ອໃຫ້ຂໍ້ມູນເບິ່ງໜ້າສົນໃຈຫຼາຍຂຶ້ນ.
- ໃຊ້ການປ່ຽນແປງ ແລະ ຜົນກະທົບເພື່ອປຽບທຽບຂໍ້ມູນໃນໄລຍະເວລາຕ່າງໆ (ຕົວຢ່າງ: ສະແດງຜົນກະທົບຂອງການປ່ຽນແປງສະພາບດິນຟ້າອາກາດກ່ອນ ແລະ ຫລັງ).
- ເພີ່ມຄໍາບັນຍາຍ ແລະ ສຽງອະທິບາຍເພື່ອຊີ້ແຈງປະເດັນສໍາຄັນ.






ການສະແດງຂໍ້ມູນ ໃນຮູບ
ແບບພາບ ຊ່ວຍໃຫ້ຂໍ້ມູນທີ່
ສັບຊ້ອນ ກາຍເປັນສິ່ງທີ່ເຫັນ
ໄດ້ ຊັດເຈນ, ດຶງຄວາມສົນໃຈ
, ແລະ ເຂົ້າໃຈໄດ້ງ່າຍຢູ່ ໃນ
ພາບລວມ.